ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 094 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສາທາລະນະສຸກ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 88/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສາທາລະນະສຸກ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 22/ຄປຈ, ລົງວັນທີ 15 ສິງຫາ 2023.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສາທາລະນະສຸກ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 88 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສາທາລະນະສຸກ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສາທາລະນະສຸກ ໃນວາລະຂອງກອງປະຊຸມຄັ້ງວັນທີ 11 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 17 ກໍລະກົດ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສາທາລະນະສຸກ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 38 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍສາທາລະນະສຸກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສາທາລະນະສຸກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເປັນລະບົບ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັບປະກັນໃຫ້ພົນລະເມືອງ ມີສຸຂະພາບດີ ແລະ ອາຍຸຍືນຍາວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ສາທາລະນະສຸກ**

ສາທາລະນະສຸກ ແມ່ນ ຂະບວນການນຳໃຊ້ ວິທະຍາສາດ, ສິລະປະ ແລະ ທັກສະ ໃນການບໍລິການສາທາລະນະສຸກ ແລະ ການສະໜັບສະໜູນການບໍລິການສາທາລະນະສຸກ ດ້ວຍການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ລັດ, ເອກະຊົນ, ສັງຄົມ ແລະ ຊຸມຊົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິລະປະ** ໝາຍເຖິງ ການປະພຶດ ແລະ ການສື່ສານ ຂອງບຸກຄະລາກອນສາທາລະນະສຸກ ໃນການປະຕິບັດວຽກງານ ດ້ວຍສີມືທີ່ດີ, ມີຄຸນນະພາບ, ມີຄວາມພາກພຽນ ແລະ ສ້າງຄວາມເພິ່ງພໍໃຈ;
2. **ທັກສະ** ໝາຍເຖິງ ຄວາມຊຳນານໃນການນຳໃຊ້ ຄວາມສາມາດ ແລະ ເຕັກນິກວິຊາສະເພາະ ເຂົ້າໃນການປະຕິບັດວຽກງານສາທາລະນະສຸກ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ;
3. **ລາຍຮັບທາງດ້ານວິຊາການ** ໝາຍເຖິງ ລາຍຮັບທີ່ໄດ້ຈາກ:
   - ການບໍລິການທາງດ້ານການແພດ ຊຶ່ງມີຄ່າ ກວດ, ປິ່ນປົວ, ວິເຄາະ, ສ່ອງລັງສີ, ຜ່າຕັດ, ຢາ, ຜະລິດຕະພັນການແພດ ແລະ ອື່ນໆ;

- ການບໍລິການທີ່ບໍ່ແມ່ນທາງດ້ານການແພດ ຊຶ່ງມີ ຄ່າໃຫ້ເຊົ່າສະຖານທີ່ຝາກລົດ, ຄ່າໃຫ້ເຊົ່າຮ້ານອາຫານ, ຮ້ານຄ້າ, ປ່ອງບໍລິການ ແລະ ອື່ນໆ;

4. **ຄວາມເປັນມືອາຊີບ** ໝາຍເຖິງ ຄວາມອາດສາມາດໃນການເຮັດວຽກ ດ້ວຍການນໍາໃຊ້ ຄວາມຮູ້, ຄວາມສາມາດ, ຄວາມຊໍານານງານ ແລະ ຈັນຍາບັນ ໃນການປະຕິບັດວຽກງານສາທາລະນະສຸກ ຕາມມາດຕະຖານ;

5. **ໝໍຕໍາແຍ** ໝາຍເຖິງ ຜູ້ຊ່ວຍການອອກລູກ ຕາມແຜນບູຮານ ໂດຍສືບທອດ ຄວາມຮູ້, ປະສົບການ ຈາກບຸກຄົນໃນຊຸມຊົນ ແລະ ໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ;

6. **ຕົວຊີ້ບອກ** ໝາຍເຖິງ ຕົວເລກສະຖິຕິ ເພື່ອກໍານົດຄາດໝາຍສູ້ຊົນ ໃນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ໃນແຕ່ລະໄລຍະ;

7. **ລັດຖະກອນແພດ** ໝາຍເຖິງ ພົນລະເມືອງລາວ ຜູ້ມີວຸດທິການສຶກສາທາງດ້ານການແພດຊັ້ນໃດໜຶ່ງ ທີ່ຖືກບັນຈຸ ໃຫ້ເຮັດວຽກ ຫຼື ແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງໃດໜຶ່ງ ຢູ່ຂະແໜງການສາທາລະນະສຸກ, ສະຖານທີ່ບໍລິການປິ່ນປົວຂອງລັດ, ສະຖານການສຶກສາສາທາລະນະສຸກ ແລະ ອົງການກາແດງລາວ ຊຶ່ງໄດ້ຮັບເງິນເດືອນ ແລະ ເງິນອຸດໜູນ ຈາກງົບປະມານຂອງລັດ;

8. **ເຫດການສຸກເສີນທາງດ້ານສາທາລະນະສຸກ** ໝາຍເຖິງ ເຫດການທີ່ເກີດຂຶ້ນ ຈາກການລະບາດພະຍາດຂະໜາດໃຫຍ່ ແລະ ແຜ່ລາມໄວ ລວມທັງເຫດການທີ່ເກີດຂຶ້ນຢ່າງກະທັນຫັນຈາກໄພພິບັດທໍາມະຊາດ ແລະ/ຫຼື ມະນຸດສ້າງຂຶ້ນ ແລ້ວພາໃຫ້ມີການເສຍຊີວິດ ແລະ ເຈັບເປັນຈໍານວນຫຼາຍ ຊຶ່ງຕ້ອງໄດ້ຮັບການປິ່ນປົວທາງດ້ານຮ່າງກາຍ, ຈິດໃຈ ແລະ ກອບກູ້ເອົາຊີວິດ;

9. **ໝໍຢາພື້ນເມືອງ** ໝາຍເຖິງ ບຸກຄົນທີ່ມີຄວາມຮູ້ ຄວາມສາມາດ ໃນການສົ່ງເສີມ, ຮັກສາສຸຂະພາບຂອງປະຊາຊົນ ຢູ່ທ້ອງຖິ່ນ ດ້ວຍການນໍາໃຊ້ ວິທີການປິ່ນປົວ, ພູມປັນຍາ ການແພດ ແລະ ການຢາພື້ນເມືອງທີ່ສືບທອດກັນມາ;

10. **ພັນທະກິດ** ໝາຍເຖິງ ໜ້າວຽກທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸວິໄສທັດ;

11. **ສຸຂະພາບໜຶ່ງດຽວ** ໝາຍເຖິງ ຂະບວນການເຮັດວຽກຮ່ວມກັນ ຂອງຫຼາຍຂະແໜງການທີ່ມີການພົວພັນຢ່າງສະໜິດແໜ້ນ ແລະ ອາໄສ ຊຶ່ງກັນ ແລະ ກັນ ໂດຍຕັດແຍກອອກຈາກກັນບໍ່ໄດ້ ລະຫວ່າງ ຄົນ, ສັດ, ສິ່ງແວດລ້ອມ ເພື່ອເຮັດໃຫ້ມີສຸຂະພາບທີ່ດີ ແລະ ມີຄວາມສົມດູນກັນແບບຍືນຍົງ;

12. **ພັນທຸກໍາ** ໝາຍເຖິງ ຄຸນລັກສະນະພື້ນຖານ ຂອງສິ່ງທີ່ມີຊີວິດ ທີ່ເປັນລະຫັດໃນການສືບທອດ ຫຼື ການສົ່ງຕໍ່ ຜ່ານຮຸ່ນໜຶ່ງ ໄປສູ່ອີກຮຸ່ນໜຶ່ງ;

13. **ນະວັດຕະກໍາ** ໝາຍເຖິງ ການນໍາໃຊ້ຄວາມຮູ້, ຄວາມສາມາດ, ກໍາມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ພັດທະນາຜະລິດຕະພັນ, ສິນຄ້າທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ ອອກສູ່ສັງຄົມ;

14. **ຄະນະກໍາມະການຈັນຍາທໍາ** ໝາຍເຖິງ ຄະນະກໍາມະການທີ່ເຮັດໜ້າທີ່ທົບທວນ ແລະ ຮັບຮອງເອົາບົດສະເໜີໂຄງການຄົ້ນຄວ້າວິທະຍາສາດ ໂດຍມີຈຸດປະສົງ ເພື່ອປົກປ້ອງ ສິດ, ຜົນປະໂຫຍດ ແລະ ຄວາມປອດໄພ ຂອງຜູ້ເຂົ້າຮ່ວມ ໃນການຄົ້ນຄວ້າວິທະຍາສາດສາທາລະນະສຸກ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສາທາລະນະສຸກ

ລັດ ໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ ພັດທະນາວຽກງານສາທາລະນະສຸກ ຕາມທິດຖືເອົາ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ເປັນຕົ້ນຕໍ, ຖືເອົາການ ປິ່ນປົວ, ຟື້ນຟູໜ້າທີ່ການ, ການບໍລິການ ແລະ ການສະໜັບສະໜູນເປັນສໍາຄັນ ດ້ວຍການປະກອບ, ສ້າງ ແລະ ພັດທະນາ ບຸກຄະລາກອນ, ສະໜອງງົບປະມານ,

ພາຫະນະ ແລະ ວັດຖຸປະກອນ ລວມທັງການກໍ່ສ້າງໂຄງລ່າງພື້ນຖານ ເຂົ້າໃນວຽກງານສາທາລະນະສຸກ ຢ່າງເໝາະສົມ ແລະ ການສົ່ງເສີມສຸຂະພາບໜຶ່ງດຽວ.

ລັດ ເອົາໃຈໃສ່ ໂຄສະນາ ເຜີຍແຜ່ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສາທາລະນະສຸກ ດ້ວຍຫຼາຍຮູບການ ເພື່ອໃຫ້ພົນລະເມືອງທຸກຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ມີຄວາມຮັບຮູ້ ແລະ ເປັນເຈົ້າການໃນການຮັກສາສຸຂະພາບ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມ ໃນການພັດທະນາ ແລະ ລົງທຶນ ເຂົ້າໃນວຽກງານສາທາລະນະສຸກ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ທັນສະໄໝ ແລະ ຍືນຍົງ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານສາທາລະນະສຸກ

ການເຄື່ອນໄຫວວຽກງານສາທາລະນະສຸກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນພັດທະນາສາທາລະນະສຸກ ໃນແຕ່ລະໄລຍະ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ບໍລິການ ວ່ອງໄວ, ທັນສະໄໝ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ຮັບປະກັນການມີມະນຸດສະທຳ, ມີຈັນຍາບັນ, ຈັນຍາທຳ, ຮັບປະກັນສຸຂະພາບ ແລະ ຊີວິດຂອງພົນລະເມືອງ ດ້ວຍການສະໜອງການບໍລິການສຸຂະພາບທີ່ ມີຄຸນນະພາບ, ສະເໝີພາບ ແລະ ທົ່ວເຖິງຕາມຫຼັກການວິທະຍາສາດທາງດ້ານການແພດ;
5. ປະສານສົມທົບ ແລະ ມີສ່ວນຮ່ວມຂອງ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນ ໃນສັງຄົມ;
6. ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

### ມາດຕາ 6 ສິດ ແລະ ພັນທະ ຂອງພົນລະເມືອງຕໍ່ວຽກງານສາທາລະນະສຸກ

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກ ເພດ, ໄວ, ເຜົ່າ, ເຊື້ອຊາດ, ສັນຊາດ, ສາສະໜາ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດໄດ້ຮັບການບໍລິການສາທາລະນະສຸກ ແລະ ມີພັນທະປະກອບທຶນ, ວັດຖຸປະກອນ, ເຫື່ອແຮງ, ສະຕິປັນຍາ ແລະ ເຂົ້າຮ່ວມກິດຈະກຳ ເພື່ອພັດທະນາວຽກງານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ຍືນຍົງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານສາທາລະນະສຸກ ຢູ່ ສປປ ລາວ.

### ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສາທາລະນະສຸກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ຍົກລະດັບຄວາມຮູ້ທາງດ້ານວິຊາການ ເພື່ອພັດທະນາວຽກງານສາທາລະນະສຸກ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ວຽກງານສາທາລະນະສຸກ

**ມາດຕາ 9 ວຽກງານສາທາລະນະສຸກ**

ວຽກງານສາທາລະນະສຸກ ມີ ດັ່ງນີ້:

1. ການບໍລິການສາທາລະນະສຸກ;
2. ການສະໜັບສະໜູນການບໍລິການສາທາລະນະສຸກ.

## ໝວດທີ 1
## ການບໍລິການສາທາລະນະສຸກ

**ມາດຕາ 10 ການບໍລິການສາທາລະນະສຸກ**

ການບໍລິການສາທາລະນະສຸກ ມີ ດັ່ງນີ້:

1. ການອະນາໄມ ແລະ ສົ່ງເສີມສຸຂະພາບ;
2. ການກັນ ແລະ ຄວບຄຸມພະຍາດ;
3. ການປິ່ນປົວ ແລະ ຟື້ນຟູໜ້າທີ່ການ;
4. ການບໍລິການອື່ນດ້ານສາທາລະນະສຸກ.

**ມາດຕາ 11 ການອະນາໄມ ແລະ ສົ່ງເສີມສຸຂະພາບ**

ການອະນາໄມ ແລະ ສົ່ງເສີມສຸຂະພາບ ແມ່ນ ການບໍລິການສາທາລະນະສຸກກ່ຽວກັບການ ທຳຄວາມສະອາດ, ກຳຈັດ, ຄວບຄຸມສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ສ້າງສະພາບທີ່ເອື້ອອຳນວຍ ດ້ວຍການໃຫ້ຂໍ້ມູນ ຂ່າວສານ, ສ້າງໃຫ້ຄົນມີສະຕິຕື່ນຕົວເປັນເຈົ້າການປະຕິບັດຕາມຫຼັກການ ແລະ ວິທີການຕ່າງໆ ໃນການເບິ່ງແຍງດູແລ ແລະ ຮັກສາສຸຂະພາບຂອງ ຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ເພື່ອໃຫ້ມີການດຳລົງຊີວິດຖືກຕ້ອງ ຕາມຫຼັກການສຸຂານາໄມ ແລະ ມີແບບແຜນການດຳລົງຊີວິດທີ່ດີ.

ການອະນາໄມ ແລະ ສົ່ງເສີມສຸຂະພາບ ປະກອບດ້ວຍ ການຮັກສາສຸຂະພາບ ແມ່ ແລະ ເດັກ, ການໂພຊະນາການ, ການຈັດຫານ້ຳສະອາດ, ການອະນາໄມສິ່ງແວດລ້ອມ, ການຮັກສາສຸຂະພາບຂັ້ນຕົ້ນ ແລະ ວຽກງານອື່ນທີ່ຕິດພັນ.

**ມາດຕາ 12 ການກັນ ແລະ ຄວບຄຸມພະຍາດ**

ການກັນ ແລະ ຄວບຄຸມພະຍາດ ແມ່ນ ການບໍລິການສາທາລະນະສຸກ ກ່ຽວກັບການນຳໃຊ້ ມາດຕະການດ້ານສາທາລະນະສຸກ, ມາດຕະການດ້ານສັງຄົມ, ຫຼັກການຄຸ້ມຄອງຄວາມປອດໄພ, ຫຼັກການຄຸ້ມຄອງຄວາມໝັ້ນຄົງດ້ານຊີວະພາບ ແລະ ການນຳໃຊ້ມາດຕະການອື່ນທີ່ຈຳເປັນ ເຂົ້າໃນການກັນ ແລະ ຄວບຄຸມ ພະຍາດ ເພື່ອຈຳກັດ ຫຼື ຫຼຸດຜ່ອນ ການເກີດເປັນພະຍາດ ລວມທັງການຫຼຸດຜ່ອນປັດໄຈສ່ຽງ, ຄວາມຮຸນແຮງ ແລະ ຄວາມອັນຕະລາຍຂອງພະຍາດ.

ການກັນ ແລະ ຄວບຄຸມພະຍາດ ປະກອບດ້ວຍ ການກັນ ແລະ ຄວບຄຸມ ພະຍາດຕິດຕໍ່ ແລະ ພະຍາດບໍ່ຕິດຕໍ່.

**ມາດຕາ 13 ການປິ່ນປົວ ແລະ ຟື້ນຟູໜ້າທີ່ການ**

ການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແມ່ນ ການບໍລິການ ສາທາລະນະສຸກ ກ່ຽວກັບການໃຫ້ບໍລິການຄົນເຈັບດ້ວຍຄວາມຮັບຜິດຊອບ, ມີ ສິລະປະ ແລະ ທັກສະ ເພື່ອກວດ, ຊອກຄົ້ນຫາ, ບົ່ງມະຕິພະຍາດ, ວາງຢາ, ປະຕິບັດເຕັກນິກການແພດ ແລະ ນຳໃຊ້ວິທີການໃນການປິ່ນປົວ ໂດຍສົມທົບກັບ ການແພດພື້ນເມືອງ, ການແພດສະໄໝໃໝ່, ວິທີການທາງສັງຄົມ ແລະ ການສຶກສາ ເພື່ອເຮັດໃຫ້ຄົນເຈັບ ໄດ້ຮັບການພັກຜ່ອນ, ຟື້ນຟູສຸຂະພາບ, ຫາຍຈາກພະຍາດ ແລະ ມີສຸຂະພາບດີ.

**ມາດຕາ 14 ການບໍລິການອື່ນດ້ານສາທາລະນະສຸກ**

ການບໍລິການອື່ນດ້ານສາທາລະນະສຸກ ແມ່ນ ການບໍລິການ ທີ່ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການບໍລິການສາທາລະນະສຸກ ເພື່ອໃຫ້ສາມາດດຳເນີນໄດ້ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ເປັນຕົ້ນ ການສະໜອງເລືອດທີ່ປອດໄພ, ການປະຖົມພະຍາບານ ແລະ ການສົ່ງຕໍ່ຄົນເຈັບ.

## ໝວດທີ 2
## ການສະໜັບສະໜູນ ການບໍລິການສາທາລະນະສຸກ

**ມາດຕາ 15 ການສະໜັບສະໜູນ ການບໍລິການສາທາລະນະສຸກ**

ການສະໜັບສະໜູນ ການບໍລິການສາທາລະນະສຸກ ມີ ດັ່ງນີ້:

1. ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ;
2. ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ;
3. ການຄຸ້ມຄອງອາຫານ;
4. ການປະກັນສຸຂະພາບ;
5. ເສດຖະສາດສາທາລະນະສຸກ;
6. ການສຶກສາສາທາລະນະສຸກ;
7. ການຄົ້ນຄວ້າວິທະຍາສາດສາທາລະນະສຸກ;
8. ລະບົບ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ;
9. ການປະເມີນຜົນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ;
10. ການສະໜັບສະໜູນອື່ນດ້ານສາທາລະນະສຸກ.

**ມາດຕາ 16 ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ**

ການຄຸ້ມຄອງ ຢາ ແລະ ຜະລິດຕະພັນການແພດ ແມ່ນ ການສະໜັບສະໜູນການບໍລິການສາທາລະນະສຸກ ກ່ຽວກັບການຄົ້ນຄວ້າ, ການພັດທະນາ, ການທົດລອງ, ການວິໄຈຄຸນນະພາບ, ການຢັ້ງຢືນ ຢາ ແລະ ຜະລິດຕະພັນການແພດ ເຊັ່ນ ການກຳນົດບັນຊີ, ຈັດປະເພດ, ຕິດຕາມຄວາມປອດໄພ, ໃຫ້ ຂໍ້ມູນ ຂ່າວສານ, ປຸງແຕ່ງ, ຜະລິດ, ຂຶ້ນທະບຽນ, ຈົດແຈ້ງ, ເກັບຮັກສາ, ຈຳໜ່າຍ, ແຈກຢາຍ ຢາ ແລະ ຜະລິດຕະພັນການແພດ ເພື່ອຮັບປະກັນຄຸນນະພາບ, ມາດຕະຖານ, ຄວາມປອດໄພ, ລາຄາ, ການນຳໃຊ້ ຢາ ແລະ ຜະລິດຕະພັນການແພດ ຢ່າງສົມເຫດສົມຜົນ ແລະ ມີຄວາມຍຸຕິທຳ.

**ມາດຕາ 17 ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ**

ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ ແມ່ນ ການສະໜັບສະໜູນການບໍລິການສາທາລະນະສຸກ ກ່ຽວກັບການສົ່ງເສີມການຢາພື້ນເມືອງ ດ້ວຍການ ປູກ, ລ້ຽງ, ຂຸດຄົ້ນພືດ, ຕົ້ນໄມ້, ສັດ ແລະ ແຮ່ທາດ ທີ່ເປັນຢາ ລວມທັງການພັດທະນາ, ອະນຸລັກ, ປົກປັກຮັກສາ, ປຸງແຕ່ງ, ຜະລິດ, ນໍາໃຊ້, ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານຊັບພະຍາກອນທີ່ເປັນຢາແບບຍືນຍົງ, ມີຄວາມອຸດົມສົມບູນ, ບໍ່ໃຫ້ສູນພັນ ເພື່ອນໍາໃຊ້ເຂົ້າໃນການບໍລິການສາທາລະນະສຸກ.

**ມາດຕາ 18 ການຄຸ້ມຄອງອາຫານ**

ການຄຸ້ມຄອງອາຫານ ແມ່ນ ການສະໜັບສະໜູນການບໍລິການສາທາລະນະສຸກ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ການປະຕິບັດຫຼັກການສຸຂານາໄມ, ວິທີການ ແລະ ເງື່ອນໄຂ ໃນການ ຜະລິດ, ປຸງແຕ່ງ, ຂຶ້ນທະບຽນ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈໍາໜ່າຍ ແລະ ວິໄຈຄຸນນະພາບອາຫານ ລວມທັງການເກັບຮັກສາ ແລະ ໂຄສະນາກ່ຽວກັບອາຫານ ເພື່ອຮັບປະກັນ ຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພຂອງອາຫານ.

**ມາດຕາ 19 ການປະກັນສຸຂະພາບ**

ການປະກັນສຸຂະພາບ ແມ່ນ ການສະໜັບສະໜູນການບໍລິການສາທາລະນະສຸກ ກ່ຽວກັບການຮັບປະກັນໃຫ້ພົນລະເມືອງລາວ ແລະ ຜູ້ປະກັນຕົນ ໄດ້ເຂົ້າເຖິງການບໍລິການສຸຂະພາບ ຢ່າງທົ່ວເຖິງ, ສະເໝີພາບ ແລະ ຫຼຸດຜ່ອນການໃຊ້ຈ່າຍຂອງຄົນເຈັບ ເປັນຕົ້ນ ການສົ່ງເສີມສຸຂະພາບ, ກັນພະຍາດ, ກວດ, ບົ່ງມະຕິ, ປິ່ນປົວ ແລະ ຟື້ນຟູໜ້າທີ່ການ ດ້ວຍການສົມທົບທຶນເຂົ້າກອງທຶນປະກັນສຸຂະພາບແຫ່ງຊາດ ຕາມກົດໝາຍ.

**ມາດຕາ 20 ເສດຖະສາດສາທາລະນະສຸກ**

ເສດຖະສາດສາທາລະນະສຸກ ແມ່ນ ການສະໜັບສະໜູນການບໍລິການສາທາລະນະສຸກ ດ້ວຍການນໍາໃຊ້ຫຼັກການທາງເສດຖະສາດ, ຄະນິດສາດ ແລະ ຂໍ້ມູນຕົວຈິງທີ່ກ່ຽວຂ້ອງ ເຂົ້າໃນການຄິດໄລ່ ເພື່ອຄາດຄະເນ, ປະເມີນ ຄວາມເປັນໄປໄດ້, ຄວາມເໝາະສົມ, ປະສິດທິພາບ, ປະສິດທິຜົນ ແລະ ຫຼຸດຜ່ອນ ຄ່າໃຊ້ຈ່າຍ, ງົບປະມານ ທີ່ບໍ່ຈໍາເປັນ ລວມທັງການຕໍ່ລອງລາຄາທີ່ຖືກຕ້ອງ ແລະ ເໝາະສົມ ກັບຜູ້ສະໜອງການບໍລິການສຸຂະພາບ, ຢາ, ວັກຊິນ ແລະ ຜະລິດຕະພັນການແພດ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດ ແກ່ສຸຂະພາບຂອງປະຊາຊົນ.

**ມາດຕາ 21 ການສຶກສາສາທາລະນະສຸກ**

ການສຶກສາສາທາລະນະສຸກ ແມ່ນ ການ ສ້າງ, ບໍາລຸງ, ຄົ້ນຄວ້າ, ວິໄຈ, ທົດລອງ, ຝຶກອົບຮົມ, ຝຶກປະຕິບັດຕົວຈິງ ໃຫ້ແກ່ນັກສຶກສາ, ບຸກຄະລາກອນສາທາລະນະສຸກ ຢູ່ສະຖານການສຶກສາສາທາລະນະສຸກ, ສະຖານທີ່ບໍລິການສາທາລະນະສຸກ ທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນ, ສູນ, ໂຮງໝໍ, ໂຮງງານ.

**ມາດຕາ 22 ການຄົ້ນຄວ້າວິທະຍາສາດສາທາລະນະສຸກ**

ການຄົ້ນຄວ້າວິທະຍາສາດສາທາລະນະສຸກ ແມ່ນ ຂະບວນການ ເກັບກໍາ, ລວບລວມຂໍ້ມູນ, ວິເຄາະ ແລະ ແປຜົນ ຂໍ້ມູນທີ່ກ່ຽວຂ້ອງ ຢ່າງເປັນລະບົບ ເປັນຕົ້ນ ການຄົ້ນຄວ້າດ້ານ ພຶດຕິກໍາ, ການທົດລອງດ້ານຄຣີນິກ, ພັນທຸກໍາ, ສາທາລະນະສຸກສາດ, ນະວັດຕະກໍາ, ເຕັກນິກວິທະຍາສາດດ້ານການແພດ, ຢາ ແລະ ຜະລິດຕະພັນການ

ແພດ ເພື່ອໃຫ້ໄດ້ຄວາມຮູ້ໃໝ່, ຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ຕ້ອງເຜີຍແຜ່, ສະໜອງຂໍ້ມູນ ທີ່ໄດ້ມາຈາກການຄົ້ນຄວ້າ ເຂົ້າໃນການປັບປຸງວຽກງານສາທາລະນະສຸກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນການຄົ້ນຄວ້າວິທະຍາສາດສາທາລະນະສຸກ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນໍາຄະນະກໍາມະການຈັນຍາທໍາທີ່ກ່ຽວຂ້ອງ ຕາມລະບຽບການ.

**ມາດຕາ 23 ລະບົບ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ**

ລະບົບ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ ແມ່ນ ລະບົບຂໍ້ມູນທີ່ສັງລວມການລາຍງານຈາກ ບ້ານ, ສະຖານທີ່ບໍລິການສາທາລະນະສຸກ, ການສໍາຫຼວດ, ການຄົ້ນຄວ້າວິທະຍາສາດ ແລະ ການເຝົ້າລະວັງ ລວມທັງການສັງລວມຕົວຊີ້ບອກ ລະດັບຊາດ ແລະ ສາກົນ ເພື່ອປະເມີນ, ວິເຄາະ, ແປຜົນ ແລ້ວລາຍງານ, ວາງແຜນການແຕ່ລະໄລຍະ ແລະ ເຜີຍແຜ່ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ ໃນຂອບເຂດທົ່ວປະເທດ.

ກະຊວງສາທາລະນະສຸກ ປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ ໃນຮູບແບບເອເລັກໂຕຣນິກ ແລະ ຮູບແບບອື່ນ.

**ມາດຕາ 24 ການປະເມີນຜົນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ**

ການປະເມີນຜົນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ແມ່ນ ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດຕາມມາດຕະຖານ ແລະ ຕົວຊີ້ບອກ ດ້ານສາທາລະນະສຸກ, ການຕີລາຄາ ຜົນສໍາເລັດ, ຂໍ້ຄົງຄ້າງ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອພັດທະນາວຽກງານສາທາລະນະສຸກ.

ມາດຕະຖານ ແລະ ຕົວຊີ້ບອກ ດ້ານສາທາລະນະສຸກ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 ການສະໜັບສະໜູນອື່ນດ້ານສາທາລະນະສຸກ**

ການສະໜັບສະໜູນອື່ນດ້ານສາທາລະນະສຸກ ແມ່ນ ການເຄື່ອນໄຫວວຽກງານອື່ນ ທີ່ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ການບໍລິການສາທາລະນະສຸກ ເປັນຕົ້ນ ການສ້າງກົນໄກປະສານງານ, ການມີສ່ວນຮ່ວມລະຫວ່າງ ຄູ່ຮ່ວມພັດທະນາ, ການນໍາໃຊ້ກໍາລັງມະຫາຊົນ.

## ພາກທີ III
## ບຸກຄະລາກອນສາທາລະນະສຸກ

**ມາດຕາ 26 ບຸກຄະລາກອນສາທາລະນະສຸກ**

ບຸກຄະລາກອນສາທາລະນະສຸກ ແມ່ນ ພະນັກງານ-ລັດຖະກອນ, ລັດຖະກອນແພດ, ຜູ້ປະກອບວິຊາຊີບປິ່ນປົວ, ພະນັກງານ ຕາມສັນຍາ ແລະ ອາສາສະໝັກຢູ່ສະຖານທີ່ບໍລິການສາທາລະນະສຸກ, ອາສາສະໝັກສາທາລະນະສຸກບ້ານ, ໝໍຕໍາແຍ, ໝໍຢາພື້ນເມືອງ.

**ມາດຕາ 27 ການຄຸ້ມຄອງບຸກຄະລາກອນສາທາລະນະສຸກ**

ຂະແໜງການສາທາລະນະສຸກ, ຂະແໜງການປ້ອງກັນປະເທດ, ຂະແໜງການປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງບຸກຄະລາກອນສາທາລະນະສຸກພາກລັດ ລວມທັງພະນັກງານຕາມສັນຍາ ແລະ ອາສາສະໝັກຢູ່

ສະຖານທີ່ບໍລິການສາທາລະນະສຸກ, ອາສາສະໝັກສາທາລະນະສຸກບ້ານ, ໝໍຕຳແຍ, ໝໍຢາພື້ນເມືອງ ດ້ວຍການບັນຈຸ, ສັບຊ້ອນ, ຈັດວາງ, ຂຶ້ນບັນຊີ ແລະ ຂຶ້ນທະບຽນ ຕາມພາລະບົດບາດຂອງຕົນ ໂດຍມີການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບການຄຸ້ມຄອງບຸກຄະລາກອນສາທາລະນະສຸກ ໃນຂົງເຂດເອກະຊົນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 28 ການພັດທະນາບຸກຄະລາກອນສາທາລະນະສຸກ**

ການພັດທະນາບຸກຄະລາກອນສາທາລະນະສຸກ ແມ່ນ ການສ້າງ, ການບຳລຸງ, ການຍົກລະດັບ ແລະ ພັດທະນາຊັບພະຍາກອນມະນຸດ ໃນຂົງເຂດສາທາລະນະສຸກ ໃຫ້ມີຄວາມຮູ້, ຄວາມສາມາດ, ມີສີລະປະ, ທັກສະ, ມີຈັນຍາບັນ, ຈັນຍາທຳ ແລະ ມີຄວາມເປັນມືອາຊີບ ໃນການປະຕິບັດວຽກງານສາທາລະນະສຸກ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ເພື່ອບັນລຸຄວາມຕ້ອງການດ້ານບຸກຄະລາກອນສາທາລະນະສຸກ ທັງດ້ານປະລິມານ ແລະ ຄຸນນະພາບ.

ຂະແໜງການສາທາລະນະສຸກ, ຂະແໜງການອື່ນ ສົ່ງເສີມ, ສ້າງເງື່ອນໄຂ ໃຫ້ບຸກຄະລາກອນສາທາລະນະສຸກ ທັງພາກລັດ ແລະ ເອກະຊົນ ໄດ້ຮັບການຝຶກອົບຮົມ, ຍົກລະດັບດ້ານວິຊາສະເພາະ, ໄດ້ຮັບການພັດທະນາ ເພື່ອສ້າງເປັນຜູ້ສືບທອດ ແລະ ຕອບສະໜອງຄວາມຕ້ອງການຂອງວຽກງານສາທາລະນະສຸກ ໃນແຕ່ລະໄລຍະ.

## ພາກທີ IV
## ການລົງທຶນໃສ່ວຽກງານສາທາລະນະສຸກ

**ມາດຕາ 29 ການລົງທຶນຂອງລັດ**

ການລົງທຶນຂອງລັດ ແມ່ນ ການສະໜອງງົບປະມານ ໃຫ້ແກ່ການບໍລິການສາທາລະນະສຸກ, ການສະໜັບສະໜູນການບໍລິການສາທາລະນະສຸກ, ການພັດທະນາຊັບພະຍາກອນມະນຸດ, ການກໍ່ສ້າງໂຄງລ່າງພື້ນຖານ, ການສະໜອງ ພາຫະນະ ແລະ ວັດຖຸປະກອນ ເພື່ອໃຫ້ບັນລຸເປົ້າໝາຍການປົກຄຸມສຸຂະພາບທົ່ວປວງຊົນ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານສາທາລະນະສຸກ ມີປະສິດທິພາບ, ມີປະສິດທິຜົນ ແລະ ຍືນຍົງ.

**ມາດຕາ 30 ແຫຼ່ງທຶນ**

ແຫຼ່ງທຶນ ທີ່ນຳໃຊ້ເຂົ້າໃນວຽກງານສາທາລະນະສຸກ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປະກັນສຸຂະພາບແຫ່ງຊາດ, ກອງທຶນຄວບຄຸມຢາສູບ ແລະ ກອງທຶນອື່ນທີ່ກ່ຽວຂ້ອງ;
3. ລາຍຮັບທາງດ້ານວິຊາການ;
4. ການຊ່ວຍເຫຼືອຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງການຈັດຕັ້ງສາກົນ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງທຶນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ງົບປະມານ**

ລັດ ຈັດບຸລິມະສິດ ແລະ ເພີ່ມອັດຕາສ່ວນລາຍຈ່າຍງົບປະມານແຫ່ງລັດ ເກົ້າສ່ວນຮ້ອຍ ຂຶ້ນໄປ ໃຫ້ແກ່ການບໍລິການສາທາລະນະສຸກ ແລະ ການສະໜັບສະໜູນການບໍລິການສາທາລະນະສຸກ.

ການຄຸ້ມຄອງ ແລະ ການນໍາໃຊ້ງົບປະມານ ໃຫ້ລວມສູນ ໂດຍຂຶ້ນກັບສາຍຕັ້ງ ຕາມລະບຽບການກ່ຽວກັບການຄຸ້ມຄອງການເງິນ ແລະ ການບັນຊີ.

**ມາດຕາ 32 ຄ່າທໍານຽມ ແລະ ຄ່າບໍລິການ**

ການເກັບຄ່າທໍານຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານສາທາລະນະສຸກຂອງພາກລັດ ໃຫ້ປະຕິບັດຕາມລະບຽບການ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ສໍາລັບຄ່າບໍລິການຂອງພາກເອກະຊົນ ໃຫ້ປະຕິບັດຕາມສະຖານທີ່ບໍລິການສາທາລະນະສຸກເອກະຊົນພາຍໃຕ້ການຄວບຄຸມຂອງລັດ ແລະ ຕ້ອງແຈ້ງລາຄາໃຫ້ຜູ້ໃຊ້ບໍລິການ ກ່ອນການບໍລິການປິ່ນປົວ.

**ມາດຕາ 33 ການລົງທຶນຂອງພາກເອກະຊົນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃສ່ວຽກງານສາທາລະນະສຸກ ເປັນຕົ້ນ ການກໍ່ສ້າງໂຄງລ່າງພື້ນຖານ, ການສະໜອງການບໍລິການສຸຂະພາບ ແລະ ຜະລິດຕະພັນການແພດ ຈະໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 34 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ລັດ ສົ່ງເສີມ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການກໍ່ສ້າງ, ປັບປຸງ, ພັດທະນາວຽກງານສາທາລະນະສຸກ.

ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ສະພາຄຸ້ມຄອງວິຊາຊີບ,
## ສະພາວິທະຍາສາດ ແລະ ສະມາຄົມ ສາທາລະນະສຸກ
### ໝວດທີ 1
### ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

**ມາດຕາ 35 ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ**

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ແມ່ນ ອົງການຄຸ້ມຄອງວິຊາຊີບ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສາທາລະນະສຸກ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ກະຊວງສາທາລະນະສຸກ ໃນການຄຸ້ມຄອງທາງດ້ານວິຊາການ ກ່ຽວກັບການຄວບຄຸມຄຸນນະພາບ, ຄວາມສາມາດ, ຈັນຍາບັນ, ຈັນຍາທໍາ, ມາດຕະຖານການປະຕິບັດງານທີ່ດີ ຂອງຜູ້ປະກອບວິຊາຊີບສາທາລະນະສຸກ, ປົກປ້ອງສິດ, ຜົນປະໂຫຍດຂອງຜູ້ໃຫ້ ແລະ ຜູ້ຮັບບໍລິການສາທາລະນະສຸກ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ**

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ນະໂຍບາຍ, ລະບຽບການ ກ່ຽວກັບຜູ້ປະກອບວິຊາຊີບສາທາລະນະສຸກ;
2. ໃຫ້ຄຳປຶກສາ ແກ່ຜູ້ປະກອບວິຊາຊີບສາທາລະນະສຸກ ກ່ຽວກັບ ຄຸນນະພາບ, ຈັນຍາບັນ, ຈັນຍາທຳ ແລະ ມາດຕະຖານ ການປະຕິບັດງານທີ່ດີ;
3. ຊຸກຍູ້, ຕິດຕາມ, ຕີລາຄາ ແລະ ປະເມີນຜົນ ການເຄື່ອນໄຫວຂອງຜູ້ປະກອບວິຊາຊີບສາທາລະນະສຸກ;
4. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນວິຊາຊີບສາທາລະນະສຸກ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ສະພາວິທະຍາສາດສາທາລະນະສຸກ

**ມາດຕາ 37 ສະພາວິທະຍາສາດສາທາລະນະສຸກ**

ສະພາວິທະຍາສາດສາທາລະນະສຸກ ແມ່ນ ການຈັດຕັ້ງທາງດ້ານວິຊາການ ທີ່ສ້າງຕັ້ງໂດຍກະຊວງສາທາລະນະສຸກ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງສາທາລະນະສຸກ ກ່ຽວກັບການຄົ້ນຄວ້າວິທະຍາສາດສາທາລະນະສຸກ.

ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາວິທະຍາສາດສາທາລະນະສຸກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງສະພາວິທະຍາສາດສາທາລະນະສຸກ**

ສະພາວິທະຍາສາດສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1.ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການ ກ່ຽວກັບການຄົ້ນຄວ້າວິທະຍາສາດສາທາລະນະສຸກ ເພື່ອນຳສະເໜີກະຊວງສາທາລະນະສຸກ ພິຈາລະນາ;

2. ສັງລວມບົດສະເໜີຄົ້ນຄວ້າວິທະຍາສາດສາທາລະນະສຸກ ຂອງພາກສ່ວນຕ່າງໆ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຂໍອະນຸມັດຈາກກະຊວງສາທາລະນະສຸກ;

3. ຄັດເລືອກ, ຈົດທະບຽນ ແລະ ຮັບຮອງ ຫົວບົດຄົ້ນຄວ້າວິທະຍາສາດສາທາລະນະສຸກ ຢູ່ພາຍໃນ ແລະ ຕ່າງປະເທດ ແລ້ວນຳສະເໜີກະຊວງສາທາລະນະສຸກ ພິຈາລະນານຳໃຊ້ເຂົ້າໃນການພັດທະນາວຽກງານສາທາລະນະສຸກ;

4. ຄົ້ນຄວ້າ, ເລືອກເຟັ້ນ ແລະ ຮັບຮອງ ເຕັກນິກ, ເຕັກໂນໂລຊີ, ວິທະຍາສາດໃໝ່ ດ້ານສາທາລະນະສຸກ ທັງພາຍໃນ ແລະ ຕ່າງປະເທດ ແລ້ວນຳສະເໜີກະຊວງສາທາລະນະສຸກ ພິຈາລະນານຳໃຊ້ເຂົ້າໃນການພັດທະນາວຽກງານສາທາລະນະສຸກ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ສະມາຄົມສາທາລະນະສຸກ

**ມາດຕາ 39 ສະມາຄົມສາທາລະນະສຸກ**

ສະມາຄົມສາທາລະນະສຸກ ແມ່ນ ການຈັດຕັ້ງສັງຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ມີຫຼາຍສາຂາວິຊາເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ, ປະກອບສ່ວນເຂົ້າໃນການພັດທະນາວຽກງານສາທາລະນະສຸກ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມສາທາລະນະສຸກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງສະມາຄົມສາທາລະນະສຸກ**

ສະມາຄົມສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວໃຫ້ຖືກຕ້ອງ ຕາມແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານຂອງຕົນ;
3. ລະດົມ, ຂໍບໍລິຈາກ ແລະ ຮັບເອົາການສະໜັບສະໜູນ ແລະ ການຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ຄວາມຮັບຜິດຊອບ, ການມີສ່ວນຮ່ວມ
## ໃນວຽກງານສາທາລະນະສຸກ ແລະ ການໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ

**ມາດຕາ 41 ຄວາມຮັບຜິດຊອບຂອງລັດ**

ອົງການຈັດຕັ້ງຂອງລັດແຕ່ລະຂັ້ນ ມີຄວາມຮັບຜິດຊອບ ໃນວຽກງານສາທາລະນະສຸກ ລວມທັງການໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ ດ້ວຍການເປັນເຈົ້າການໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ກົດໝາຍ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ໂຄສະນາ ເຜີຍແຜ່, ປຸກລະດົມ ແລະ ການກຳນົດມາດຕະການໃນການປະຕິບັດວຽກງານ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

**ມາດຕາ 42 ຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງສັງຄົມ**

ທຸກພາກສ່ວນໃນສັງຄົມ ມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມ ໃນວຽກງານສາທາລະນະສຸກ ລວມທັງການໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ ເປັນຕົ້ນ ການສຶກສາອົບຮົມ, ການໂຄສະນາ ເຜີຍແຜ່ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ, ການປຸກລະດົມ ທົ່ວປວງຊົນ ໃຫ້ຄວາມສຳຄັນແກ່ວຽກງານສາທາລະນະ

ສຸກ ແລະ ເອົາໃຈໃສ່ ປະຕິບັດມາດຕະການທີ່ລັດວາງອອກ ໃນແຕ່ລະໄລຍະ ເພື່ອໃຫ້ພົນລະເມືອງທຸກຄົນ ມີສຸຂະພາບດີ ແລະ ອາຍຸຍືນຍາວ.

**ມາດຕາ 43 ການໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ**

ການໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ ແມ່ນ ການນຳໃຊ້ ມາດຕະການດ້ານສາທາລະນະສຸກ, ມາດຕະການທາງດ້ານສັງຄົມ, ມາດຕະການອື່ນທີ່ຈຳເປັນ ແລະ ລະບຽບການສາກົນດ້ານສາທາລະນະສຸກ ເຊັ່ນ ການນຳໃຊ້ວິທີການທາງດ້ານການແພດ, ການສະໜອງ ຢາ, ວັກຊິນກັນພະຍາດ, ອຸປະກອນການແພດ, ພາຫະນະ, ວັດຖຸປະກອນ, ບຸກຄະລາກອນສາທາລະນະສຸກ ແລະ ການກໍ່ສ້າງໂຄງລ່າງພື້ນຖານ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກະກຽມ ແລະ ໂຕ້ຕອບເຫດການສຸກເສີນທາງດ້ານສາທາລະນະສຸກ ຢ່າງທັນການ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 44 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງ ອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່, ຈຳແນກ, ໝິ່ນປະໝາດ ຕໍ່ການເຄື່ອນໄຫວວຽກງານ ຫຼື ການປະຕິບັດໜ້າທີ່ ຂອງບຸກຄະລາກອນສາທາລະນະສຸກ;

2. ໃສ່ຮ້າຍ ປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ບຸກຄະລາກອນສາທາລະນະສຸກ;

3. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

4. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ເກີນຄວາມເປັນຈິງ, ໃນທາງບິດເບືອນ, ທີ່ສ້າງຄວາມເສື່ອມເສຍໃຫ້ແກ່ວຽກງານສາທາລະນະສຸກ;

5. ນຳໃຊ້, ເປີດເຜີຍ, ດັດແປງ, ສົ່ງ ຫຼື ທຳລາຍ ຂໍ້ມູນ ຂ່າວສານດ້ານສາທາລະນະສຸກ ໂດຍບໍ່ໄດ້ຮັບອະນຸຍາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 45 ຂໍ້ຫ້າມ ສຳລັບບຸກຄະລາກອນສາທາລະນະສຸກ**

ຫ້າມ ບຸກຄະລາກອນສາທາລະນະສຸກ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຕົນ;

2. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ນຳໃຊ້ເອກະສານປອມ ຫຼື ອອກ, ທຳລາຍ ເອກະສານ ໂດຍບໍ່ໄດ້ຮັບອະນຸຍາດ;

3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ລຳອຽງ, ຂາດ ຄວາມຮັບຜິດຊອບ, ຈັບຍາບັນ ແລະ ຈັນຍາທຳ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສຸຂະພາບ ຫຼື ຊີວິດ ຂອງບຸກຄົນອື່ນ;

4. ຂໍເອົາ, ທວງເອົາ, ຮັບເອົາ ສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ຮຽກເອົາຄ່າທຳນຽມ ຫຼື ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

6. ນຳໃຊ້ລາຍຮັບດ້ານວິຊາການ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. ເປີດເຜີຍຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ ວຽກງານສາທາລະນະສຸກ
### ໝວດທີ 1
### ການຄຸ້ມຄອງວຽກງານສາທາລະນະສຸກ

**ມາດຕາ 46 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານສາທາລະນະສຸກ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ວຽກງານສາທາລະນະສຸກ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ.

ເພື່ອຮັບປະກັນໃຫ້ວຽກງານສາທາລະນະສຸກ ດຳເນີນໄປຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ອົງການຄຸ້ມຄອງວຽກງານສາທາລະນະສຸກ ອາດໃຫ້ສຸກສາລາ ຫຼື ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ຊ່ວຍໃນການຄຸ້ມຄອງວຽກງານສາທາລະນະສຸກ.

ສຳລັບ ສິດ ແລະ ໜ້າທີ່ຂອງ ສຸກສາລາ ຫຼື ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານສາທາລະນະສຸກ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການກ່ຽວກັບວຽກງານສາທາລະນະສຸກ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການກ່ຽວກັບວຽກງານສາທາລະນະສຸກ ມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາທາລະນະສຸກ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສາທາລະນະສຸກ;

5. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສາທາລະນະສຸກຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ທີ່ຂັດກັບກົດໝາຍ;

6. ຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວ ຂອງສະພາຄຸ້ມຄອງວິຊາຊີບ, ສະພາວິທະຍາສາດ ແລະ ສະມາຄົມສາທາລະນະສຸກ;

7. ຄົ້ນຄວ້າ ສ້າງ, ຄຸ້ມຄອງ ແລະ ພັດທະນາ ລະບົບ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ;

8. ສ້າງ, ບຳລຸງ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນສາທາລະນະສຸກ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານສາທາລະນະສຸກ;

10. ປຸກລະດົມ ແລະ ຂົນຂວາຍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນວຽກງານ ສາທາລະນະສຸກ;

11. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານສາທາລະນະສຸກ ໃນຂອບເຂດ ທົ່ວປະເທດ;

12. ປະສານສົມທົບກັບ ກະຊວງອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ;

13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສາທາລະນະສຸກ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສາທາລະນະສຸກ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາທາລະນະສຸກ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບວຽກງານສາທາລະນະສຸກ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສາທາລະນະສຸກ;

4. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສາທາລະນະສຸກ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ທີ່ຂັດກັບກົດໝາຍ;

5. ຄຸ້ມຄອງ, ນຳໃຊ້, ແລກປ່ຽນ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ;

6. ສ້າງ, ບຳລຸງ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນສາທາລະນະສຸກ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານສາທາລະນະສຸກ;

8. ປຸກລະດົມ ແລະ ຂົນຂວາຍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນວຽກງານ ສາທາລະນະສຸກ;

9. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານສາທາລະນະສຸກ;

10. ປະສານສົມທົບກັບ ພະແນກອື່ນ, ອົງການ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານສາທາລະນະສຸກ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສາທາລະນະສຸກ ຕາມການມອບໝາຍ;

12.ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຕໍ່ ກະຊວງສາທາລະນະສຸກ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສາທາລະນະສຸກ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາທາລະນະສຸກ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບວຽກງານສາທາລະນະສຸກ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສາທາລະນະສຸກ;

4. ຄຸ້ມຄອງ, ນຳໃຊ້, ແລກປ່ຽນ ຂໍ້ມູນ ຂ່າວສານ ດ້ານສາທາລະນະສຸກ;

5. ສະເໜີ ສ້າງ, ບຳລຸງ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນສາທາລະນະສຸກ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສາທາລະນະສຸກ;

7. ປຸກລະດົມ ແລະ ຂົນຂວາຍ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນວຽກງານ ສາທາລະນະສຸກ;

8. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານສາທາລະນະສຸກ;

9. ປະສານສົມທົບກັບຫ້ອງການອື່ນ, ອົງການ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານສາທາລະນະສຸກ;

10.ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຕໍ່ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານສາທາລະນະສຸກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການສາທາລະນະສຸກ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສາທາລະນະສຸກ

**ມາດຕາ 51 ອົງການກວດກາ**

ອົງການກວດກາວຽກງານສາທາລະນະສຸກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສາທາລະນະສຸກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ພົນລະເມືອງ ແລະ ສື່ມວນຊົນ.

**ມາດຕາ 52 ເນື້ອໃນການກວດກາ**

ການກວດກາວຽກງານສາທາລະນະສຸກ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາທາລະນະສຸກ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງ;
3. ການສ້າງ ແລະ ປະຕິບັດແຜນພັດທະນາສາທາລະນະສຸກ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 53 ຮູບການການກວດກາ**

ການກວດກາວຽກງານສາທາລະນະສຸກ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສາທາລະນະສຸກ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ເຄື່ອງແບບ, ເຄື່ອງໝາຍ, ຕາປະທັບ ແລະ ວັນ ສາທາລະນະສຸກ

**ມາດຕາ 54 ເຄື່ອງແບບ**

ກະຊວງສາທາລະນະສຸກ ເປັນຜູ້ກຳນົດເຄື່ອງແບບສະເພາະຂອງບຸກຄະລາກອນສາທາລະນະສຸກ.

**ມາດຕາ 55 ເຄື່ອງໝາຍ ແລະ ຕາປະທັບ**

ຂະແໜງການສາທາລະນະສຸກ ມີ ເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ໂດຍກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

**ມາດຕາ 56 ວັນສາທາລະນະສຸກ**

ລັດ ກຳນົດ ເອົາວັນແພດລາວ ວັນທີ 18 ມິຖຸນາ ເປັນວັນສາທາລະນະສຸກ.

ໃນແຕ່ລະປີ ຂະແໜງການສາທາລະນະສຸກ ສ້າງຂະບວນການ ແລະ ຈັດກິດຈະກຳ ເພື່ອລະນຶກເຖິງຜົນງານ ແລະ ສົມລະເສີນຄຸນງາມຄວາມດີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ແຕ່ສະໄໝ ຕໍ່ສູ້ກູ້ຊາດຈົນເຖິງປັດຈຸບັນ ທັງເປັນການປຸກລະດົມມວນຊົນ ໃຫ້ເຫັນຄວາມສຳຄັນ ແລະ ເປັນເຈົ້າການໃນການສົ່ງເສີມການຮັກສາສຸຂະພາບ ທົ່ວປວງຊົນ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 58 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 60 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 25 ກັນຍາ 2023 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ